EDL-GEN ສະເຫຼີມສະຫຼອງ ວັນກຳມະກອນສາກົນ ຄົບຮອບ 140 ປີ ແລະ ເປີດຫ້ອງວາງສະແດງມູນເຊື້ອຂອງເຂື່ອນໄຟຟ້ານ້ຳງື່ມ 1 ຢ່າງເປັນທາງການ

EDL-GEN













ເຂື່ອນໄຟຟ້ານ້ຳງື່ມ 1, ແຂວງວຽງຈັນ (23 ເມສາ 2026): ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ຈັດພິທີ ສະເຫຼີມສະຫຼອງ ວັນກຳມະກອນສາກົນ ຄົບຮອບ 140 ປີ ແລະ ເປີດຫ້ອງວາງສະແດງມູນເຊື້ອຂອງ ເຂື່ອນໄຟຟ້ານ້ຳງື່ມ 1 ຢ່າງເປັນທາງການ ເພື່ອສະເຫຼີມສະຫຼອງການເປີດນຳໃຊ້ ເຂື່ອນໄຟຟ້ານ້ຳງື່ມ 1 ຄົບຮອບ 55 ປີ (ວັນທີ 02/12/1971 - 02/12/2026)

ພິທີດັ່ງກ່າວໄດ້ຈັດຂຶ້ນໂດຍການເປັນກຽດເຂົ້າຮ່ວມຂອງ ທ່ານ ພູທະນູເພັດ ໄຊສົມບັດ, ເລຂາພັກແຂວງ/ປະທານສະພາປະຊາຊົນແຂວງວຽງຈັນ; ທ່ານ ສຸລິວັດ ສຸວັນນະຈູມຄຳ, ຮອງລັດຖະມົນຕີ ກະຊວງການເງິນ ແລະ ທັງເປັນປະທານສະພາບໍລິຫານ ຜ-ຟຟລ, ທ່ານ ສຸກສະຫວາດ ໂສສຸພັນ, ຜູ້ອຳນວຍການໃຫຍ່ ຜ-ຟຟລ ພ້ອມດ້ວຍຄະນະຜູ້ບໍລິຫານ, ພະນັກງານ ແລະ ແຂກຜູ້ມີກຽດຈາກພາກສ່ວນຕ່າງໆ.

ໃນບົດກ່າວເປີດພິທີ, ທ່ານ ສຸກສະຫວາດ ໂສສຸພັນ ຜູ້ອຳນວຍການໃຫຍ່ ຜ-ຟຟລ ໄດ້ເນັ້ນໜັກວ່າ: ເຂື່ອນໄຟຟ້ານ້ຳງື່ມ 1 ບໍ່ພຽງແຕ່ເປັນແຫຼ່ງຜະລິດພະລັງງານໄຟຟ້າທີ່ສຳຄັນເທົ່ານັ້ນ, ແຕ່ຍັງເປັນສັນຍາລັກແຫ່ງການບຸກເບີກ ແລະ ພັດທະນາທີ່ທ້າທາຍ. ນັບຕັ້ງແຕ່ເລີ່ມກໍ່ສ້າງໃນປີ 1968, ໂຄງການນີ້ໄດ້ຜ່ານການພັດທະນາຂະຫຍາຍກຳລັງການຜະລິດເຖິງ 5 ໄລຍະ, ຈາກເລີ່ມຕົ້ນພຽງ 30 ເມກາວັດ (MW) ກ້າວສູ່ 275 ເມກາວັດ ໃນປັດຈຸບັນ.

ຫ້ອງວາງສະແດງມູນເຊື້ອແຫ່ງນີ້ ໄດ້ຖືກສ້າງຂຶ້ນເພື່ອເປັນບ່ອນເກັບຮັກສາບັນດາຂໍ້ມູນ, ຮູບພາບ ແລະ ເຄື່ອງມືອຸປະກອນປະຫວັດສາດທີ່ຫາຊົມໄດ້ຍາກ ເຊິ່ງສະແດງໃຫ້ເຫັນເຖິງ:

·ວິວັດທະນາການການກໍ່ສ້າງ: ນັບແຕ່ໄລຍະບຸກເບີກ ຈົນເຖິງການນຳໃຊ້ເຕັກນິກທີ່ທັນສະໄໝໃນການຂະຫຍາຍກຳລັງການຜະລິດ.

·ການຊີ້ນຳ-ນຳພາ: ຈາລຶກເຫດການສຳຄັນທີ່ການນຳຂັ້ນສູງຂອງ ພັກ ແລະ ລັດ ໄດ້ໃຫ້ຄວາມໃກ້ຊິດ ແລະ ຊີ້ນຳໃນແຕ່ລະໄລຍະ.

·ຄວາມມານະອົດທົນ: ສະແດງເຖິງເຫື່ອແຮງ ແລະ ຄວາມທຸ່ມເທຂອງພະນັກງານ-ກຳມະກອນ ທີ່ໄດ້ເສຍສະຫຼະ ເພື່ອສ້າງແສງສະຫວ່າງໃຫ້ແກ່ສັງຄົມ.

“ຫ້ອງວາງສະແດງມູນເຊື້ອແຫ່ງນີ້ ຈະກາຍເປັນສູນການຮຽນຮູ້ທີ່ສຳຄັນ ສຳລັບພະນັກງານຮຸ່ນສືບທອດ, ນັກຮຽນ-ນັກສຶກສາ ແລະ ມວນຊົນທັງພາຍໃນ ແລະ ຕ່າງປະເທດ ໃຫ້ໄດ້ເຂົ້າໃຈເຖິງຄຸນຄ່າ ແລະ ຄວາມໝາຍອັນເລິກເຊິ່ງຂອງເຂື່ອນໄຟຟ້ານ້ຳງື່ມ 1 ທີ່ມີຕໍ່ການພັດທະນາເສດຖະກິດ-ສັງຄົມ ຂອງຊາດເຮົາ,” ທ່ານ ຜູ້ອຳນວຍການໃຫຍ່ ຜ-ຟຟລ ກ່າວຕື່ມ.

ໃນນາມຜູ້ຄຸ້ມຄອງໂຄງການ, ຜ-ຟຟລ ໄດ້ໃຫ້ຄຳໝັ້ນສັນຍາວ່າ ຈະສືບຕໍ່ປົກປັກຮັກສາ ແລະ ຄຸ້ມຄອງເຂື່ອນໄຟຟ້ານ້ຳງື່ມ 1 ໃຫ້ມີຄວາມໝັ້ນຄົງ, ຜະລິດພະລັງງານໄຟຟ້າຢ່າງມີປະສິດທິພາບ ແລະ ຍືນຍົງ ເພື່ອເປັນການຕອບບຸນແທນຄຸນຕໍ່ບັນດາຜົນງານທີ່ຄົນຮຸ່ນກ່ອນໄດ້ສ້າງໄວ້.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ທາງເລືອກທີ່ຍືນຍົງສຳລັບທ່ານ, ພະລັງງານທີ່ຍືນຍົງສຳລັບຊາດ